# ຢາວັກຊີນປ້ອງກັນພະຍາດ ໂຄວິດ-19 ສໍາລັບເດັກນ້ອຍ
## ສິ່ງທີ່ພໍ່ແມ່/ຜູ້ປົກຄອງຄວນຮູ້

**ມີຢາວັກຊີນປ້ອງກັນພະຍາດ COVID-19 ສໍາລັບຜູ້ ທີ່ມີອາຍຸ 6 ເດືອນຂຶ້ນໄປແລ້ວ.**

## ຍ້ອນຫຍັງລູກຂອງຂ້າພະເຈົ້າຈຶ່ງຄວນໄດ້ຮັບຢາວັກຊີນ?

ນັບຕັ້ງແຕ່ເລີ່ມມີການແຜ່ລະບາດຂອງພະຍາດໂຄວິດ ເປັນຕົ້ນມາ, ມີເດັກນ້ອຍຫຼາຍ ກ່ວາ 15 ລ້ານຄົນໃນສະຫາລັດຕິດພະຍາດໂຄວິດ-19. ພະຍາດໂຄວິດ-19 ສາຍພັນ ໃໝ່ໄດ້ແຜ່ກະຈາຍຊຶ່ງເຮັດໃຫ້ມີຄົນເຂົ້ານອນປິ່ນປົວພະຍາດໂຄວິດ-19 ຢູ່ໃນໂຮງໝໍທະລຸເຖິງຂີດສູງສຸດໃນບັນດາ ໄວໜຸ່ມ.

ການທົດລອງທາງດ້ານຄລີນິກໄດ້ພິສູດວ່າ ຢາວັກຊີນນີ້ປ້ອງກັນພະຍາດ ໂຄວິດ-19ໃນໄວໜຸ່ມໄດ້ດີຫຼາຍ. ພວກເຂົາຈະມີໂອກາດໜ້ອຍທີ່ອາດຈະເຈັບປ່ວຍໜັກ, ໄດ້ນອນໂຮງໝໍ ຫຼື ເສຍຊີວິດຈາກພະຍາດ ໂຄວິດ-19.

ໃຫ້ກວດສອບຂໍ້ມູນນີ້ໃນ ຄູ່ມືແນະນໍາການສົນທະນາກ່ຽວກັບຄູ່ມືວັກຊີນ ສໍາລັບຄໍາແນະນໍາວິທີ ການສົນທະນາກ່ຽວກັບວັກຊີນກັບໄວໜຸ່ມ ແລະ ຄອບຄົວ.

## ຂ້າພະເຈົ້າຈະພາລູກຂອງຂ້າພະເຈົ້າໄປສັກຢາວັກຊີນໄດ້ແນວໃດ?

ລັດວໍຊິງຕັນໄດ້ສະໜອງວັກຊີນທີ່ແນະນໍາທັງໝົດໃຫ້ແກ່ເດັກນ້ອຍທີ່ມີອາຍຸຕໍ່າກ່ວາ 18 ປີ ໂດຍ ບໍ່ຄິດໄລ່ຄ່າໃຊ້ຈ່າຍ. ຖາມແພດຂອງເດັກ ຫຼື ຄລີນິກປະຈໍາຂອງລູກຂອງທ່ານວ່າ ພວກເຂົາມີຢາວັກຊີນປ້ອງກັນພະຍາດ ໂຄວິດ-19 ຫຼື ບໍ.

ຄອບຄົວທີ່ບໍ່ມີຜູ້ໃຫ້ບໍລິການດ້ານສຸຂະພາບສາມາດໂທຫາສາຍ **Help Me Grow WA Hotline ໄດ້ທີ່ເບີ 1-800-322-2588** ຫຼື ໄປທີ່ **ParentHelp123.org** ເພື່ອຄົ້ນຫາ ຜູ້ໃຫ້ບໍລິການດ້ານສຸຂະພາບ, ຄລີນິກ, ຫຼື ແຫຼ່ງຂໍ້ມູນດ້ານສຸຂະພາບອື່ນໆ. ບໍລິການນີ້ ແມ່ນບໍ່ເສຍ ຄ່າ ແລະ ມີບໍລິການຊ່ວຍເຫຼືອດ້ານພາສາ.

ທ່ານຍັງສາມາດເຂົ້າເບິ່ງໄດ້ທີ່ **VaccineLocator.doh.wa.gov** ແລະ ໃຊ້ຕົວກັ່ນຕອງເພື່ອເບິ່ງລາຍຊື່ສະຖານທີ່ໃກ້ກັບທ່ານທີ່ມີຢາວັກຊີນສໍາລັບເດັກ.

## ນີ້ຈະຊ່ວຍໄດ້ແນວໃດຢູ່ເຮືອນ?

ຢາວັກຊີນປ້ອງກັນພະຍາດ ໂຄວິດ-19 ສາມາດປ້ອງກັນເດັກນ້ອຍ ຈາກການຕິດເຊື້ອພະຍາດໄດ້, ໝາຍຄວາມວ່າການຊຸມນຸມພາຍໃນເຮືອນ ສາມາດປອດໄພກວ່າໃນການເປັນເຈົ້າພາບ ຫຼື ຜູ້ເຂົ້າຮ່ວມ.



ການສັກວັກຊີນຈະຊ່ວຍໃຫ້ເດັກນ້ອຍປອດໄພຍິ່ງຂຶ້ນ ແລະ ປົກປ້ອງສະມາຊິກຄອບຄົວໃນ ຄົວເຮືອນ.

ບັນດາຄອບຄົວຄວນສືບຕໍ່ປະຕິບັດຕາມມາດຕະການຄວາມປອດໄພອື່ນໆທີ່ແນະນໍາສໍາລັບການປ້ອງກັນທີ່ດີທີ່ສຸດ.

## ເດັກນ້ອຍຄວນໄດ້ຮັບຢາວັກຊີນປະເພດໃດ?



- ເດັກນ້ອຍທີ່ມີອາຍຸ 6 ເດືອນ - 4 ປີ ຈະໄດ້ຮັບຊຸດວັກຊີນໄບວາເລັນ Pfizer 3 ເຂັມ ຫຼື ຊຸດວັກຊີນ ໄບວາເລັນ Moderna 2 ເຂັມ
- ເດັກນ້ອຍ ທີ່ມີອາຍຸ 5 ປີ ຈະໄດ້ຮັບໜຶ່ງເຂັມຂອງວັກຊີນ Pfizer ໄບວາເລັນ ຫຼື ຊຸດວັກຊີນ ໄບວາເລັນ Moderna 2 ເຂັມ
- ເດັກນ້ອຍ ທີ່ມີອາຍຸ 6 ປີຂຶ້ນໄປ ຈະໄດ້ຮັບໜຶ່ງເຂັມຂອງວັກຊີນໄບວາເລັນ

ເດັກນ້ອຍທີ່ມີອາຍຸ 6 ເດືອນຂຶ້ນໄປ ຜູ້ທີ່ມີບົກຜ່ອງດ້ານພູມຄຸ້ມກັນລະດັບປານກາງ ຫຼື ຮຸນແຮງອາດຈະໄດ້ຮັບເຂັມໄບວາເລັນເພີ່ມເຕີມຢ່າງໜ້ອຍ 2 ເດືອນ ຫຼັງຈາກໄດ້ຮັບເຂັມທີ່ໄດ້ຮັບການປັບປຸງສຸດທ້າຍຂອງພວກເຂົາ.

**ເພື່ອໃຫ້ໄດ້ຮັບຄໍາຕອບສໍາລັບຄໍາຖາມຂອງທ່ານ:**

**ເຂົ້າເບິ່ງ: VaccinateWA.org/kids**

**ໂທ: 1-833-VAX-HELP** (1-833-829-4357), **ກົດ #**

ມີການຊ່ວຍເຫຼືອດ້ານພາສາ.

Vaccinate WA

CovidVaccineWA.org

## ພະຍາດ ໂຄວິດ-19 ມີຄວາມສ່ຽງຕໍ່ລູກຂອງຂ້າພະເຈົ້າແທ້ບໍ?

ເຖິງແມ່ນວ່າ ເດັກນ້ອຍຈະຕິດເຊື້ອພະຍາດ ໂຄວິດ-19 ໜ້ອຍກວ່າຜູ້ໃຫຍ່ກໍຕາມ, ແຕ່ເດັກນ້ອຍກໍສາມາດ:

- ຕິດເຊື້ອໄວຣັດທີ່ກໍ່ໃຫ້ເກີດ ພະຍາດ ໂຄວິດ-19
- ເຈັບປ່ວຍ ຫຼື ເສຍຊີວິດຈາກພະຍາດ ໂຄວິດ-19
- ແຜ່ເຊື້ອພະຍາດ ໂຄວິດ-19 ໄປສູ່ຜູ້ອື່ນ
- ໄດ້ຮັບອາການແຊກຊ້ອນຮ້າຍແຮງຈາກພະຍາດ ໂຄວິດ-19, ເຊັ່ນວ່າ: "ມີພະຍາດ ໂຄວິດ ເປັນເວລາຍາວນານ" ຫຼື ພະຍາດອັກເສບທີ່ເປັນອັນຕະລາຍທີ່ເອີ້ນວ່າ MIS-C

ຢາວັກຊີນໄດ້ສະແດງໃຫ້ເຫັນວ່າ ມີຜົນຂ້າງຄຽງໜ້ອຍຫຼາຍໃນປະຊາກອນນີ້ ແລະ ມັນປົກປ້ອງພວກເຂົາໄດ້ດີຫຼາຍຈາກການຕິດເຊື້ອພະຍາດ. ຜົນປະໂຫຍດຂອງການສັກຢາວັກຊີນມີຫຼາຍກວ່າຄວາມສ່ຽງຕໍ່ການຕິດເຊື້ອພະຍາດ ໂຄວິດ-19.

## ຢາວັກຊີນມີຄວາມປອດໄພສຳລັບລູກຂອງຂ້າພະເຈົ້າແມ່ນບໍ?

ແມ່ນ, ຢາວັກຊີນຖືວ່າມີຄວາມປອດໄພຫຼາຍ ສຳລັບບໍ່ພົບຜົນຂ້າງຄຽງທີ່ຮ້າຍແຮງ ໃນການທົດລອງທາງຄລີນິກຂອງວັກຊີນ ໃນໄວໜຸ່ມ. ບັນດາການສຶກສາ ທີ່ກຳລັງດຳເນີນຢູ່ ແລະ ສະຫະລັດມີລະບົບຄວາມປອດໄພ ຂອງຢາວັກຊີນທີ່ເຂັ້ມແຂງເພື່ອຈັບສັນຍານເຕືອນໄພລ່ວງໜ້າ.

## ຜົນຂ້າງຄຽງທີ່ມັກພົບຂອງຢາວັກຊີນ ໃນເດັກນ້ອຍມີຫຍັງແດ່?

ຄວາມສ່ຽງດ້ານສຸຂະພາບຂອງເດັກນ້ອຍທີ່ຕິດເຊື້ອພະຍາດ ໂຄວິດ-19ແມ່ນສູງກວ່າຄວາມສ່ຽງຂອງຜົນຂ້າງຄຽງຂອງຢາວັກຊີນ.

ຄືກັນກັບຢາວັກຊີນອື່ນໆ, ຜົນຂ້າງຄຽງທີ່ມັກພົບລວມມີອາການເຈັບແຂນ, ອິດເມື່ອຍ, ປວດຫົວ ແລະ ເຈັບກ້າມ. ອາການເຫຼົ່ານີ້ມັກຈະບໍ່ຮຸນແຮງ.

ຜົນຂ້າງຄຽງໂດຍທົ່ວໄປແມ່ນມີຄວາມຮຸນແຮງເລັກນ້ອຍເຖິງປານກາງ ແລະ ເກີດຂຶ້ນພາຍໃນສອງມື້ຫຼັງຈາກການສັກຢາວັກຊີນ ແລະ ສ່ວນຫຼາຍແມ່ນຫາຍໄປພາຍໃນໜຶ່ງຫາສອງມື້.

## ເດັກນ້ອຍຈຳເປັນຕ້ອງກະກຽມຫຍັງໄປໃນການນັດໝາຍຂອງພວກເຂົາ?

ໃນກໍລະນີສ່ວນຫຼາຍ, ພໍ່ແມ່ ແລະ ຜູ້ປົກຄອງຈະຕ້ອງໃຫ້ການຍິນຍອມ ໃນການສັກຢາວັກຊີນໃຫ້ກັບຜູ້ທີ່ມີອາຍຸຕໍ່າກວ່າ 18 ປີ. ພວກເຂົາຄວນຖາມສະຖານທີ່ສັກຢາວັກຊີນວ່າພວກເຂົາຕ້ອງການການຍິນຍອມ ຫຼື ບໍ່.

ບັນດາຄລີນິກອາດຈະຂໍລະຫັດຂອງເດັກ, ບັດປະກັນໄພ, ຫຼື Social Security number (ໝາຍເລກປະກັນສັງຄົມ), ແຕ່ທ່ານບໍ່ຈຳເປັນຕ້ອງໃຫ້ພວກເຂົາ:

ເດັກນ້ອຍບໍ່ຈຳເປັນຕ້ອງເປັນພົນລະເມືອງໃນສະຫະລັດອາເມລິກາເພື່ອສັກຢາວັກຊີນ. ສະຖານທີ່ສັກຢາວັກຊີນຈະບໍ່ສາມາດຖາມຫາສະຖານະພາບການເຂົ້າເມືອງໃດໆ. ຂໍ້ມູນສ່ວນຕົວຈະຖືກນຳໃຊ້ເພື່ອຈຸດປະສົງດ້ານສາທາລະນະສຸກເທົ່ານັ້ນ.

## ຂ້າພະເຈົ້າມີຄຳຖາມເພີ່ມເຕີມ ຂ້າພະເຈົ້າສາມາດໄປບ່ອນໃດ?

ຊອກຫາຄຳຕອບ ສຳລັບຄຳຖາມເພີ່ມເຕີມໄດ້ທີ່ **VaccinateWA.org/kids**. ທ່ານຍັງສາມາດລົມກັບຜູ້ໃຫ້ບໍລິການດູແລສຸຂະພາບປະຈຳຂອງລູກຂອງທ່ານໄດ້.